## ສອງສະພາແຫ່ງຊາດ ລາວ-ກຳປູເຈຍເສີມຂະຫຍາຍການຮ່ວມມື.



(ວຈ): ຄະນະຜູ້ແທນກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແຫ້ງ ສປປ ລາວ ນຳພາໂດຍ ທ່ານ ດວງດີ ອຸດທະຈັກ ພ້ອມດ້ວຍຄະນະໄດ້ຕອນຮັບ ແລະ ພົບປະສອງຝ່າຍກັບຄະນະຜູ້ແທນກຳມາທິການສາທາລະນະສຸກ ວຽກງານສັງຄົມ ຟື້ນຟູບຳບັດ ຊາວໜຸ່ມແຮງງານ ບຳລຸງວິຊາຊີບ ແລະ ວຽກງານແມ່ຍິງສະພາແຫ່ງຊາດ ແຫ່ງລາດສະອານາຈັກກຳປູເຈຍ ນຳໂດຍທ່ານ ນາງ ໂຮນອນ ຫົວໜ້າຄະນະກຳມາທິການສາທາລະນະສຸກ ວຽກງານສັງຄົມ ຟື້ນຟູບຳບັດວຽກງານຊາວໜຸ່ມ ແຮງງານບຳລຸງວິຊາຊີບ ແລະ ວຽກງານແມ່ຍິງສະພາແຫ່ງຊາດ ແຫ່ງລາດສະອານາຈັກ ກຳປູເຈຍ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ຄະນະດັ່ງກ່າວໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຢ່າງເປັນທາງການໃນລະຫວ່າງວັນທີ 9-15 ສິງຫາ 2010.

ໂອກາດນີ້ທັງສອງຄະນະກຳມາທິການສະພາແຫ່ງຊາດ ກໍ່ໄດ້ຜັດປ່ຽນກັນລາຍງານສະພາບເສດຖະກິດດສັງຄົມ ກໍຄືການຈັດຕັ້ງປະຕິບັດວຽກງານຂອງສອງສະພາແຫ່ງຊາດ ໃນໄລຍະຜ່ານມາໃຫ້ກັນຊາບ ພ້ອມທັງໄດ້ແລກປ່ຽນບົດຮຽນ ແລະ ປຶກສາຫາລືທົບທວນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ຊອກຊອງທາງຄວາມເປັນໄປໄດ້ໃນການພົວພັນຮ່ວມມືກັນໃນຕໍ່ໜ້າອີກດ້ວຍ ການມາຢ້ຽມຢາມ ແລະ ເຮັດວຽກຮ່ວມກັນ ລະຫວ່າງສອງຄະນະດັ່ງກ່າວຄັ້ງນີ້ ໄດ້ສະແດງເຖິງການຂະຫຍາຍທານພົວພັນ ຮ່ວມມືທີ່ນັບມື້ມີບາດກ້າວຂະຫຍາຍຕົວ ແລະ ນຳຜົນປະໂຫຍດ ມາໃຫ້ປະຊາຊົນສອງຊາດນັບມື້ນັບຫຼາຍຂຶ້ນ.